ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 07888 / ກພສ
ນະຄອນຫຼວງວຽງຈັນ, ວັນທີ 12 ທັນວາ 2018

# ແຈ້ງການແນະນຳ

ເຖິງ : ບັນດາທ່ານຜູ້ປະກອບການທີ່ດຳເນີນທຸລະກິດນຳເຂົ້າສິນຄ້າ, ເຄື່ອງຂອງ ເຂົ້າມາ ສປປ ລາວ ໃນຂອບເຂດທົ່ວປະເທດ.

ເລື່ອງ : ການປະກອບເອກະສານເພື່ອຂໍໜັງສືຢັ້ງຢືນສິດທິພິເສດດ້ານອັດຕາພາສີໃນກອບສັນຍາການຄ້າເສລີຕ່າງໆ ທີ່ ສປປ ລາວ ເປັນພາຄີ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ຂໍ້ຕົກລົງຂອງກົມພາສີ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.
- ອີງຕາມ ຄຳແນະນຳຂອງກົມພາສີ ສະບັບເລກທີ 03782/ກພສ, ລົງວັນທີ 16 ກຸມພາ 2016 ກ່ຽວກັບແຫຼ່ງກຳເນີດສິນຄ້າ ແລະ ການໃຊ້ສິດທິພິເສດດ້ານອັດຕາພາສີ ຕາມເງື່ອນໄຂຂອງບັນດາສັນຍາການຄ້າເສລີຕ່າງໆ ທີ່ ສ.ປ.ປ ລາວ ເຂົ້າເປັນພາຄີ.

ເພື່ອກະກຽມຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວ ແລະ ເອື້ອອຳນວຍຄວາມສະດວກໃຫ້ຜູ້ປະກອບການໃນການປະກອບເອກະສານ ເພື່ອຂໍໜັງສືຢັ້ງຢືນສິທິພິເສດດ້ານອັດຕາພາສີ ໃນກອບການຄ້າເສລີຕ່າງໆ ທີ່ ສ.ປ.ປ ລາວ ເປັນພາຄີ ສຳລັບການນຳເຂົ້າສິນຄ້າ, ເຄື່ອງຂອງ ໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ ເປັນການປະຢັດເວລາ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

## ກົມພາສີ ອອກແຈ້ງການແນະນຳ ດັ່ງນີ້ :

1. ເລີ່ມແຕ່ວັນທີ 01 ມັງກອນ 2019 ເປັນຕົ້ນໄປ ບັນດາທ່ານຜູ້ປະກອບການທີ່ມີຈຸດປະສົງຂໍໜັງສືຢັ້ງຢືນສິດທິພິເສດດ້ານອັດຕາພາສີໃນກອບສັນຍາການຄ້າເສລີຕ່າງໆ ທີ່ ສປປ ລາວ ເປັນພາຄີ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້ :
   - ໃບສະເໜີຫາກົມພາສີ (ພະແນກນິຕິກຳ);
   - ສຳເນົາໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ;
   - ສຳເນົາໃບແຈ້ງລາຄາ (Invoice) ແລະ ໃບລາຍການຫຸ້ມຫໍ່ສິນຄ້າ (Packing List);
   - ສຳເນົາໃບຂົນສົ່ງສິນຄ້າ: Bill of Landing, Truck Bill, Air WayBill, Manifest (Master Bill or House Bill) ແລະ ອື່ນໆທີ່ນຳໃຊ້ທົ່ວໄປໃນລະບົບການຂົນສົ່ງສິນຄ້າສາກົນ (ບໍ່ລວມເອົາໃບຂົນສົ່ງ ສບ 3);

- ➢ ສຳເນົາໃບທະບຽນວິສາຫະກິດ (ດ້ານໜ້າ-ຫຼັງ); ໃບທະບຽນອາກອນ ແລະ/ຫຼື ໃບຢັ້ງຢືນການມອບພັນທະອາ ກອນປະຈຳປີ (ປີຫຼ້າສຸດ).

ບັນດາເອກະສານສຳເນົາດັ່ງກ່າວຕ້ອງໄດ້ຈ້ຳກາບໍລິສັດ ເພື່ອຢັ້ງຢືນສຳເນົາຖືກຕ້ອງຕາມສະບັບຕົ້ນ

2. ການສົ່ງເອກະສານສາມາດມາຍື່ນດ້ວຍຕົນເອງ ທີ່ພະແນກນິຕິກຳ (ກົມພາສີ) ແລະ/ຫຼື ສົ່ງຜ່ານທາງລະບົບເອເລັກໂຕຣນິກ ທີ່ຢູ່ E-mail: legislation.laocustoms2018@gmail.com ຫຼືເບີໂທ: 021 285294, 030 5185800 ຫຼື ຖ້າບໍລິສັດໃດຕ້ອງການຂໍ້ມູນລະອຽດໃຫ້ປະສານຫາ ຂະແໜງຈັດລະຫັດສິນຄ້າ ແລະ ມູນຄ່າແຈ້ງພາສີ ພະແນກນິຕິກຳ, ກົມພາສີ ( ຕາມວັນ ແລະ ເວລາລັດຖະການ );
3. ການຄົ້ນຄວ້າ ແລະ ອອກເອກະສານຢັ້ງຢືນການໄດ້ຮັບສິດທິພິເສດດ້ານອັດຕາພາສີແມ່ນມີກຳນົດ 03 ວັນທາງລັດຖະການ (ໃນກໍລະນີເອກະສານຖືກຕ້ອງຄົບຖ້ວນ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ກະຊວງການເງິນ ກົມພາສີ

ບຸນປະເສີດ ສີກຸນລະບຸດ

**ບ່ອນສົ່ງ:**

| | |
|---|---|
| - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ | 01 ສະບັບ " ໃຊ້ຕາງລາຍງານ " |
| - ທ່ານ ຮອງລັດຖະມົນຕີກະຊວງການເງິນ ຜູ້ຊີ້ນຳ | 01 ສະບັບ " ໃຊ້ຕາງລາຍງານ " |
| - ບັນດາພະແນກການກົມພາສີ ພະແນກລະ | 01 ສະບັບ " ເພື່ອຮັບຊາບ " |
| - ກອງຄຸ້ມຄອງພາສີ I-VII ກອງລະ | 01 ສະບັບ " ເພື່ອຮັບຊາບ " |
| - ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ ດ່ານລະ | 01 ສະບັບ " ເພື່ອຮັບຊາບ " |
| - ສະພາອຸດສະຫະກຳການຄ້າ | 01 ສະບັບ " ເພື່ອຮັບຊາບ " |
| - ສຳເນົາ | 01 ສະບັບ. |